ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບໍລິສັດ ລາວອາໂກຣເທັກ ມະຫາຊົນ ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໂທລະສັບ: (856-21)520715, ແຟັກ:(856-21)256259
LAO AGROTECH PUBLIC COMPANY BAN VATTAINOYTHONG, SIKHOTTHABONG DISTRICT, VIENTIANE CAPITAL. TEL: (856-21)520715, FAX: (856-21)256259

ເລກທີ: 052 /ລອທ

ນະຄອນຫຼວງວຽງຈັນ, 29 MAY 2020

ທ່ານ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື

ເລື່ອງ: ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 004/ຄຄຊ, ລົງວັນທີ 28/1/2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເມື່ອວັນທີ 28 ພຶດສະພາ 2020 ເວລາ 14:00 ໂມງ ຢູ່ທີ່ຫ້ອງປະຊຸມຊັ້ນ 8 ຕະຫຼາດຫຼັກຊັບລາວ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມ ທັງໝົດ 17 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດ້ວຍຕົນເອງຈຳນວນ 10 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 7 ທ່ານ ຖືຮຸ້ນລວມ 76,517,097 ຮຸ້ນ ຄິດເປັນ 76.52 ສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 76,517,097 ສຽງ ຄິດເປັນ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 76,517,097 ສຽງ ຄິດເປັນ 100 %

2. ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2019 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2019

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 76,517,097 ສຽງ ຄິດເປັນ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 76,517,097 ສຽງ ຄິດເປັນ 100 %

3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 76,517,097 ສຽງ ຄິດເປັນ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 76,517,097 ສຽງ ຄິດເປັນ 100 %

4. ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດ ປະຈຳປີ 2019

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 76,517,097 ສຽງ ຄິດເປັນ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 76,517,097 ສຽງ ຄິດເປັນ 100 %

5. ພິຈາລະນາ ແລະ ອະນຸມັດເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງບໍລິສັດ

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 76,517,097 ສຽງ ຄິດເປັນ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 76,517,097 ສຽງ ຄິດເປັນ 100 %

6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2020

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 76,517,097 ສຽງ ຄິດເປັນ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 76,517,097 ສຽງ ຄິດເປັນ 100 %

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆ ດັ່ງນັ້ນ ປະທານຈຶ່ງກ່າວປິດກອງປະຊຸມເວລາ 15:00 ໂມງ, ຈຶ່ງຮຽນມາເພື່ອຊາບ.

ດ້ວຍຄວາມນັບຖືຢ່າງສູງ

ປະທານກອງປະຊຸມ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ຄຳແພງ ພັດທະດາວົງ